# ຄວາມຫວັງໃນປັດຈຸບັນ
# ແລະໃນອະນາຄົດ

## ຂໍ້ຄວາມສຳລັບປີ 2021

ມະນຸດຊາດສາມາດກ້າວເດີນໄປໄດ້ ກໍຍ້ອນບັນດາຜູ້ມີຈິດໃຈກວ້າງຂວາງບໍລິຈາກ, ເຖິງແມ່ນວ່າຈະຢູ່ໃນຊ່ວງເວລາທີ່ຫຍຸ້ງຍາກແລະຫວາດກົວນີ້ກໍຕາມ.

ຕະຫລອດຊ່ວງເວລາຫລາຍເດືອນທີ່ຜ່ານມາ, ພວກໜຸ່ມເຍົາວະຊົນໄດ້ເປີດເຜີຍໃຫ້ພວກເຮົາຮູ້ເຖິງຄວາມເປັນຫວ່ງກັງວົນສຳລັບອະນາຄົດຂອງພວກເຂົາ: ແມ່ນຄວາມຫວັງອັນໃດທີ່ຈະຊີ້ນຳພວກເຮົາ, ອັນໃດເປັນສິ່ງແນ່ນອນຊຶ່ງພວກເຮົາສາມາດເພິ່ງອີງໄດ້, ເມື່ອເວລາທຸກສິ່ງເບິ່ງຄືບໍ່ແນ່ນອນ? ແລະສຳຄັນໄປກວ່ານັ້ນອີກ: ພວກເຮົາຈະມີຊີວິດເພື່ອເປົ້າໝາຍອັນໃດ? ມີສຽງໜຶ່ງທີ່ດັງກ້ອງຂຶ້ນມາວ່າ: ຈົ່ງຢ່າສິ້ນຫວັງ: ຈົ່ງສັງເກດເຄື່ອງໝາຍແຫ່ງຄວາມຫວັງ[1].

## ຈົ່ງສັງເກດເຄື່ອງໝາຍແຫ່ງຄວາມຫວັງ

ໃນສະພາບສັງຄົມປັດຈຸບັນທີ່ຖືກໂລກລະບາດພະຍາດໂກວິດ, ພວກເຮົາໄດ້ເຫັນການຂະຫຍາຍຕົວຂອງໄພພິບັດໃນຫລາຍປະເທດຢູ່ໃນໂລກ. ການຕັດສິນໃຈຢ່າງເດັດດ່ຽວດ້ານການປົກຄອງການເມືອງເປັນສິ່ງຈຳເປັນແລະສຳຄັນ, ແຕ່ຄວາມເປັນນ້ຳໜຶ່ງໃຈດຽວກັນແລະສາຍໄຍມິດຕະພາບໃນຊີວິດສັງຄົມກໍເປັນປັດໃຈສຳຄັນແລະຂາດບໍ່ໄດ້ເຊັ່ນດຽວກັນ. ຫລາຍຄົນກໍໄດ້ພ້ອມທີ່ຈະສະໝັກໃຈເພື່ອຮັບໃຊ້ຊ່ວຍເຫລືອຄົນອື່ນ. ຄວາມເອື້ອອາທອນຂອງພວກເຂົາຊ່ວຍບອກເຕືອນພວກເຮົາວ່າ ຄວາມຊ່ວຍເຫລືອເຊິ່ງກັນແລະກັນເປັນສິ່ງທີ່ເປີດໄຂຫົນທາງສູ່ອະນາຄົດ.

ຈະມີພວກໜຸ່ມເຍົາວະຊົນເທົ່າໃດຄົນທີ່ປະກອບເຫື່ອແຮງຂອງພວກເຂົາເພື່ອຊ່ວຍເຮືອນສ່ວນລວມຂອງພວກເຮົາອັນແມ່ນໂລກທີ່ພວກເຮົາອາໄສຢູ່ນີ້ນັ້ນເອງ. ພວກເຮົາມີຄວາມຄິດລິເລີ່ມຫລາຍຢ່າງທີ່ນຳສະເໜີຂຶ້ນມາ, ເຖິງວ່າຈະບໍ່ໄດ້ຮັບຄຳຕອບຕໍ່ຄຳສະເໜີເຫລົ່ານັ້ນກໍຕາມກ່ຽວກັບພາວະສຸກເສີນດ້ານພູມິອາກາດທີ່ກຳລັງກ້າວໄປສູ່ວິຖີຊີວິດຊຶ່ງມີຄວາມສຳຄັນກັບສະພາບແວດລ້ອມ[2]. ສຳລັບຜູ້ທີ່ມີຄວາມເຊື່ອ

---

[1] ເພື່ອສະແດງຄວາມຄິດເຫັນຕໍ່ຂໍ້ຄວາມສຳລັບປີ 2021, ພວກເຮົາເຊື້ອເຊີນພວກໜຸ່ມເຍົາວະຊົນທີ່ມີອາຍຸແຕ່ 15 ຫາ 35 ປີໃຫ້ຍົກຕົວຢ່າງຊີວິດຈິງ. ຄວາມຄິດລິເລີ່ມໃດຫລືບຸກຄົນໃດສຳລັບຂ້ອຍທີ່ສາມາດເປັນເຄື່ອງໝາຍແຫ່ງຄວາມຫວັງໄດ້? ໃນເດືອນທີ່ຈະມາເຖິງ, ຄວາມຄິດຄວາມເຫັນເຫລົ່ານີ້ຈະໄດ້ນຳສະເໜີພາຍໃຕ້ຮູບແບບຂອງ: ບົດຂຽນ, ວີດີໂອຮູບພາບ, ວິທະຍຸກະຈາຍສຽງ....ຈົ່ງຂຽນມາຫາພວກເຮົາຕາມທີ່ຢູ່ນີ້: solidarity@taize.fr.

[2] ໃນການສູ້ຊົນກັບການປ່ຽນແປງພູມິອາກາດແລະເພື່ອລົດການປ່ອຍອາຍກາກບອນ, ພວກເຮົາເຄີຍຖາມຕົວເອງຢູ່ບໍວ່າຈະຕ້ອງກະທຳຢ່າງໃດເພື່ອແກ້ໄຂບັນຫານີ້? ກຸ່ມກຣິສຕະຊົນມີສ່ວນຮ່ວມໃນໂຄງການນີ້: ຄວາມຄິດລິເລີ່ມຂອງກຸ່ມສາດສະໜາສຳພັນກໍມີດັ່ງເຄືອຄ່າຍຂອງ "ພຣະກຣິສຕະຈັກສີຂຽວ" ທີ່ໄດ້ຈັດຂຶ້ນໃນທຸກປະເທດ.

ໃນພຣະເຈົ້າ, ແຜ່ນດິນນີ້ແມ່ນພຣະຄຸນຊຶ່ງພຣະເຈົ້າປະທານໃຫ້ພວກເຮົາເພື່ອດູແລຮັກສາ. ແຕ່ບາງຄັ້ງຄວາມຮັບຮູ້ເຖິງໂຄງສ້າງຂອງຄວາມອະຍຸດຕິທຳທີ່ສືບຕໍ່ມາແຕ່ອະດີດຕະການນັ້ນກໍເພີ່ມທະວີຂຶ້ນ. ແລະຜູ້ທີ່ມີອຳນາດກໍບໍ່ໄດ້ໃຊ້ໃຫ້ຖືກຕ້ອງເພື່ອຄວາມດີສ່ວນລວມ. ຕໍ່ໜ້າບັນຫາເຫລົ່ານີ້ກໍມີການຕໍ່ຕ້ານແລະການຖົກຖຽງກັນຊຶ່ງກໍເປັນເລື່ອງທຳມະດາ. ແມ່ນໃຜຈະມີຄວາມຫ້າຫານເພື່ອຈະເປັນບຸກຄົນແຫ່ງຄວາມຍຸດຕິທຳແລະສັນຕິສຸກຕໍ່ໜ້າການຂັດແຍ່ງນີ້ຢູ່ໃນສັງຄົມ?

## ຊີວິດຖານອ້າຍນ້ອງ

ທ່າມກາງສະພາບຄວາມຫຍຸ້ງຍາກໃນຊ່ວງເວລາປັດຈຸບັນນີ້, ເປັນໄປໄດ້ທີ່ຈະມີຄວາມຫວັງ, ແລະບາງຄັ້ງກໍຕ້ອງມີຄວາມຫວັງຕໍ່ສິ່ງທີ່ມຸ່ງຫວັງທັງຫລາຍ. ດ້ວຍເຫດນີ້, ພວກເຮົາຈິ່ງລວມຕົວກັນກັບບັນດາຜູ້ທີ່ມີຄວາມຄິດເຫັນແຕກຕ່າງກັບພວກເຮົາ, ກັບກຸ່ມກຣິສຕະຊົນແລະກຸ່ມສາດສະໜາອື່ນ, ກັບຄົນທີ່ມີຄວາມເຊື່ອຖືອື່ນ ແລະກັບກຸ່ມຄົນທີ່ບໍ່ເຊື່ອຖືເລີຍ. ເພາະເຂົາເຫລົ່ານັ້ນກໍມີຄວາມມຸ່ງຫວັງໃນອຸດົມຄະຕິຂອງການດຳລົງຊີວິດຖານອ້າຍນ້ອງແລະການຊ່ວຍເຫລືອເຊິ່ງກັນແລະກັນດ້ວຍ.

ຄວາມປິຕິຍິນດີຈະເກີດມີມາ ເມື່ອພວກເຮົາໃຊ້ຊີວິດຮ່ວມກັນຖານອ້າຍນ້ອງ, ເມື່ອພວກເຮົາໃກ້ຊິດກັບຄົນຍາກຈົນ, ກັບຄົນທີ່ບໍ່ມີທີ່ຢູ່ອາໄສ, ກັບຜູ້ສູງອາຍຸ, ກັບຄົນທີ່ເຈັບໄຂແລະໂດດດ່ຽວ, ກັບບັນດາເຍົາວະຊົນທີ່ມີບັນຫາຊີວິດ, ກັບຄົນພິການແລະກັບຜູ້ອົບພະຍົບ. ສະພາບຊີວິດສາມາດທຳໃຫ້ພວກເຮົາເປັນຄົນອ່ອນແອ. ແລະໂລກລະບາດໂກວິດກໍສະທ້ອນໃຫ້ພວກເຮົາເຫັນເຖິງຄວາມອອ່ແອຂອງມະນຸດດ້ວຍ.

ເໜືອສິ່ງອື່ນໃດ, ພວກເຮົາຕ້ອງການຄວາມຊ່ວຍເຫລືອເຊິ່ງກັນແລະກັນ. ພຣະສັນຕະປາປາຟັງຊິສໂກໄດ້ບອກເຕືອນພວກເຮົາຢ່າງໜັກແໜ້ນໃນສົມມະນາສານທີ່ມີຊື່ວ່າ: “Fratelli tutti”, “ທຸກຄົນເປັນອ້າຍນ້ອງກັນ”. ພຣະສັນຕະປາປາກ່າວວ່າ: “ບໍ່ມີໃຜສາມາດເອົາຕົວຮອດໄດ້ດ້ວຍຕົນເອງ”. ພຣະສັນຕະປາປາກ່າວຕື່ມອີກວ່າ: “ພວກເຮົາບໍ່ສາມາດພົບເຫັນຕົວເອງຢ່າງແທ້ຈິງໄດ້, ຖ້າພວກເຮົາບໍ່ເປີດກວ້າງເຂົ້າຫາຄົນອື່ນ: ເຂົ້າຫາໂລກສາກົນ, ເພື່ອຈະໄດ້ຮູ້ຈັກສິ່ງທີ່ເກີດຂຶ້ນໃນໂລກ, ເຂົ້າຫາຄວາມຮັ່ງມີໃນວັດທະນາທຳອື່ນ, ເພື່ອຈະໄດ້ຮູ້ຈັກແບ່ງປັນຄວາມຫຍຸ້ງຍາກທີ່ເກີດຂຶ້ນກັບມະນຸດຄົນອື່ນ” (ຂໍ້ທີ 32 ແລະ 146).

ໃນຄວາມສຳພັນລະຫວ່າງບຸກຄົນແລະລະຫວ່າງປະຊາກອນ, ໃຫ້ພວກເຮົາພະຍາຍາມເທົ່າທີ່ທຳໄດ້ເພື່ອຂ້າມຜ່ານການແຂ່ງຂັນຍາດຊີງກັນໄປສູ່ການຮ່ວມໄມ້ຮ່ວມມືກັນ. ຈົ່ງສະໜັບສະໜູນອົງກອນຫລືສະມາຄົມທີ່ສົ່ງເສີມຄວາມຮ່ວມມືແລະຄວາມສາມັກຄີເປັນໜຶ່ງດຽວກັນໃນຂັ້ນທ້ອງຖິ່ນ ກໍຄືຂັ້ນປະເທດແລະຂັ້ນຕ່າງປະເທດ.

---

ເມື່ອປີ 1989, ພຣະກຣິສຕະຈັກຂອງທະວີບຢູໂຣບໄດ້ຊຸມນຸມກັນຢູ່ Bâle ເພື່ອຮຽກຮ້ອງໃຫ້ “ປັບປຸງນວິຖີຊີວິດຊຶ່ງກໍໃຫ້ເກີດຜົນຮ້າຍຕໍ່ສະພາບແວດລ້ອມໃຫ້ໜ້ອຍລົງເທົ່າທີ່ທຳໄດ້. ໝາຍຄວາມວ່າເໜືອສິ່ງອື່ນໃດແມ່ນການລົດໃຊ້ພະລັງງານ ໂດຍຫັນມາໃຊ້ລະບົບການຂົນສົ່ງສາທາລະນະແລະຈຳກັດການຖິ້ມຂີ້ເຫຍື້ອຊະຊາຍ”.

ຢູ່ Taizé ພວກເຮົາກໍພະຍາຍາມຢ່າງຕໍ່ເນື່ອງດ້ານການປຸ່ງແປງທາງນິເວດວິທະຍາ.

ເພື່ອຊ່ວຍໃຫ້ຄຳຄິດຄຳເຫັນ, ພວກເຮົາພ້ອມທີ່ຈະຮັບທຸກຂໍ້ສະເໜີຂອງພວກທ່ານຕາມທີ່ຢູ່ນີ້ (www.taize.fr/eco).

## ຄວາມເຊື່ອ - ການໄວ້ວາງໃຈໃນການປະທັບຢູ່ຂອງພຣະເຈົ້າ

ຢູ່ Taizé ພວກເຮົາສັງເກດເຫັນວ່າພວກໜຸ່ມເຍົາວະຊົນໄດ້ຄິດພິດຈາລະນາແລະຕັ້ງຄໍາຖາມໃນລັກສະນະໃໝ່ເຖິງຄວາມເຊື່ອໃນພຣະເຈົ້າ. ເຊື່ອໃນພຣະເຈົ້າໝາຍຄວາມວ່າແນວໃດ? ແລະເມື່ອພຣະເຈົ້າມີຈິງ, ພຣະອົງໄດ້ກະທໍາສິ່ງໃດໃນປະຫວັດສາດແລະໃນຊີວິດຂອງພວກເຮົາ?

ຕໍ່ໜ້າຄໍາຖາມເຫລົ່ານີ້, ໃຫ້ພວກເຮົາລະວັງ, ຢ່າຖືຕົວເອງວ່າຕົນເປັນພຣະເຈົ້າເພື່ອນໍາພຣະອົງມາຢູ່ໃນຄວາມຄິດຄໍານວນແບບມະນຸດ. ເພາະພຣະເຈົ້າຢູ່ເໜືອທຸກສິ່ງຊຶ່ງພວກເຮົາບໍ່ສາມາດຈິນຕະນາການໄດ້. ພວກເຮົາເປັນພຽງແຕ່ນັກຄົ້ນຄວ້າທີ່ຊອກຫາແລະກະຫາຍຄວາມຮັກແລະຄວາມຈິງເທົ່ານັ້ນ. ບໍ່ວ່າພວກເຮົາຈະຢູ່ໃສບົນເສັ້ນທາງແຫ່ງການສະແຫວງບຸນໃນຊີວິດຈິດ, ພວກເຮົາລ້ວນແຕ່ຍ່າງແບບຄົນບໍ່ເຫັນຮຸ່ງ. ແຕ່ວ່າ, ເມື່ອຢູ່ຕໍ່ໜ້າ "ການສະແຫວງບຸນໃນຄວາມໄວ້ວາງໃຈ"ແລ້ວ, ສິ່ງນັ້ນຈະເປັນໄປໄດ້ ກໍຕໍ່ເມື່ອພວກເຮົາຍ່າງໄປດ້ວຍກັນ, ແລະແບ່ງປັນການຊອກສະແຫວງຫາຂອງພວກເຮົາ: ຄໍາຖາມທີ່ພວກເຮົາມີແລະຄວາມຄິດເຫັນຂອງພວກເຮົາແຕ່ລະຄົນ.

"ຄວາມເຊື່ອແມ່ນຄວາມໄວ້ວາງໃຈໃນພຣະເຈົ້າ. ຄວາມເຊື່ອເປັນແຮງກະຕຸ້ນໃຫ້ມີຄວາມໄວ້ວາງໃຈພັນຄັ້ງຕະຫລອດຊີວິດຂອງພວກເຮົາ. ເຖິງວ່າ, ບາງຄັ້ງ, ພວກເຮົາແຕ່ລະຄົນອາດຈະມີຄວາມສົງໄສ". ດັ່ງທີ່ brother Roger ໄດ້ກ່າວ.

ຄວາມເຊື່ອ, ກ່ອນອື່ນໝົດແມ່ນຄວາມໄວ້ວາງໃຈໃນການປະທັບຢູ່ຂອງພຣະເຈົ້າໃນສ່ວນເລິກຂອງພວກເຮົາແລະຢູ່ໃນໂລກຈັກກະວານ. ເຖິງວ່າຈະເປັນສິ່ງທີ່ເຂົ້າໃຈໄດ້ຍາກ, ແຕ່ມັນກໍແມ່ນຄວາມຈິງ. ການປະທັບຢູ່ຂອງພຣະເຈົ້າບໍ່ໄດ້ກົດດັນພວກເຮົາ, ແຕ່ພວກເຮົາສາມາດຕ້ອນຮັບພຣະອົງທຸກຄັ້ງເມື່ອພວກເຮົາຢູ່ໃນຄວາມມິດງຽບ, ເໝືອນພວກເຮົາຫາຍໃຈ. ເປັນການປະທັບຢູ່ທີ່ເຕັມດ້ວຍຄວາມຮັກ, ເຖິງແມ່ນວ່າພວກເຮົາຈະມີຄວາມສົງໄສ, ພວກເຮົາຈະບໍ່ເຂົ້າໃຈວ່າພຣະເຈົ້າແມ່ນໃຜກໍຕາມ.

## ພົບເຫັນທິດທາງໃໝ່

ການປະທັບຢູ່ຂອງພຣະເຈົ້າດ້ວຍຄວາມຮັກເມດຕາ - ພຣະວໍລະສານໄດ້ອະທິບາຍໃຫ້ພວກເຮົາຢ່າງໃດເຖິງທໍາລໍ້າເລີກນີ້?

ພຣະເຢຊູເຈົ້າໄດ້ຊົງປະທັບຢູ່ດ້ວຍຄວາມຮັກເມດຕາຈົນເຖິງທີ່ສຸດ. ການປະທັບຢູ່ນີ້ເປັນແສງສະຫວ່າງພາຍໃນ, ເປັນຈິດຂອງພຣະເຈົ້າ, ພະລະກໍາລັງຂອງພຣະຈິດເຈົ້າ....

ຢູ່ສ່ວນເລິກຂອງຄວາມທຸກທໍລະມານແລະຄວາມໂດດດ່ຽວ, ເມື່ອພຣະເຢຊູເຈົ້າສິ້ນພຣະຊົນບົນໄມ້ກາງເຂນ, ເມື່ອທຸກຢ່າງເບິ່ງຄືບໍ່ມີຄວາມໝາຍ, ພຣະເຢຊູເຈົ້າຮ້ອງດ້ວຍຄວາມຮູ້ສຶກເໝືອນກັບຖືກປະຖິ້ມ. ແຕ່ພຣະອົງຮ້ອງຫາພຣະເຈົ້າວ່າ: "ໂອພຣະອົງເຈົ້າ, ໂອພຣະອົງເຈົ້າ, ເປັນຫຍັງພຣະອົງຈຶ່ງປະຖິ້ມຂ້າພະເຈົ້າ?"

ຖືກທໍລະຍົດ, ຖືກທໍລະມານ, ແລະຕັດສິນໃຫ້ຕາຍ, ໃນຄວາມມືດທີ່ຄອບງໍາ, ພຣະເຈົ້າໄດ້ໄຂສໍາແດງຄວາມຮັກ. ແລະຄວາມຮັກນີ້ໄດ້ຊະນະຄວາມຊົ່ວຮ້າຍ.

ນາງມາຣີອາມັກດາເຣນາ, ແລະພວກສາວົກກໍໄດ້ປະກາດຂ່າວດີທີ່ບໍ່ຄິດບໍ່ຝັນ: "ພຣະອົງໄດ້ກັບເປັນຄືນມາແລ້ວ". ຄວາມຮັກຂອງພຣະເຈົ້າໄດ້ຊະນະຄວາມກຽດຊັງແລະຄວາມຕາຍ.

ເມື່ອໄດ້ຮັບຂ່າວດີນີ້, ກຸ່ມກຣິສຕະຊົນທໍາອິດໄດ້ມີຄວາມຍິນດີແລະເປັນພິຍານວ່າ: ພຣະກຣິສໂຕເຈົ້າມີຊີວິດຢູ່ກັບພຣະເຈົ້າ. ພຣະອົງໄດ້ປະທານໃຫ້ໂລກເຕັມພຽບດ້ວຍພຣະຈິດເຈົ້າ. ພຣະອົງໄດ້ປະທັບຢູ່ໃນພວກເຮົາແຕ່ລະຄົນ. ພຣະອົງຢູ່ຄຽງຂ້າງຄົນຍາກຈົນແລະປະທານຄວາມຍຸດຕິທໍາໃຫ້ພວກເຂົາ. ພຣະອົງໄດ້ທໍາໃຫ້ປະຫວັດສາດຂອງມະນຸດແລະສິ່ງສ້າງສົມບູນ. ແລະພຣະອົງຈະຕ້ອນຮັບພວກເຮົາຫລັງຄວາມຕາຍເຂົ້າໃນຄວາມຍິນດີທີ່ແທ້ຈິງ.

ນອກເໜືອຈາກຄວາມຮຸນແຮງຂອງມະນຸດ, ນອກເໜືອຈາກໄພພິບັດຂອງສິ່ງແວດລ້ອມ, ພະຍາດໂລຄາ, ທິດທາງໃໝ່ໄດ້ເປີດໄຂອອກ. ພວກເຮົາຈະສາມາດພົບເຫັນໄດ້ຫລືບໍ່?

## ການປຸກນິໄສທັດ

ຈາກທິດທາງໃໝ່ທີ່ໄດ້ໄຂສໍາແດງຜ່ານການກັບເປັນຄືນມາຂອງພຣະເຢຊູກຣິສໂຕເຈົ້າ, ແສງສະຫວ່າງໄດ້ເຂົ້າມາໃນຊີວິດຂອງພວກເຮົາ. ເປັນແສງສະຫວ່າງທີ່ຟື້ນຟູຄືນໃໝ່ຢູ່ສະເໝີ, ແສງສະຫວ່າງນີ້ຈະຂັບໄລ່ທົ່ມເງົາແຫ່ງຄວາມຢ້ານກົວ. ແສງສະຫວ່າງນີ້ຈະທໍາໃຫ້ບໍ່ນໍ້າບັນດານຊີວິດພຸ່ງອອກ. ແສງສະຫວ່າງນີ້ຈະທໍາໃຫ້ເກີດຄວາມຍິນດີແລະການສັນລະເສີນ.

ດັ່ງນັ້ນ, ພວກເຮົາຈຶ່ງສໍາຜັດໄດ້ຢ່າງລັບໆເຖິງການເຊື້ອເຊີນຂອງທໍາລໍ້າເລີກນີ້, ພຣະກຣິສໂຕເຈົ້າສືບຕໍ່ທີ່ຈະຫ້ອນໂຮມພວກເຮົາແລະໂລກຈັກກະວານໄວ້ໃນຄວາມຮັກຂອງພຣະເຈົ້າຈົນເຖິງວາລະສຸດທ້າຍ. ແລະພຣະອົງກໍເຊື້ອເຊີນພວກເຮົາໃຫ້ປະກອບສ່ວນໃນພາລະກິດນີ້ຂອງພຣະອົງ.

ພຣະອົງໄດ້ທໍາໃຫ້ພວກເຮົາມີສ່ວນຮ່ວມໃນພຣະກຣິສຕະຈັກຂອງພຣະອົງ. ສິ່ງນີ້ສະແດງອອກຜ່ານທາງການເປີດກວ້າງມິດຕະພາບໃຫ້ກັບທຸກຄົນ. ພຣະກຣິສໂຕຮ້ອງຂໍພວກເຮົາໃຫ້ຮັກແພງແມ່ນກະທັ້ງຜູ້ເປັນສັດຕູກັບພວກເຮົາ. ສັນຕິສຸກຂອງພຣະອົງທໍາໃຫ້ມີການຄືນດີກັນແມ່ນທັ້ງປະເທດທີ່ຂັດສູ້ກັນ[3].

---

[3] ໃນຊ່ວງເວລາແຫ່ງຄວາມຍາກລໍາບາກຂອງການລະບາດພະຍາດໂກວິດນີ້, ພຣະກຣິສຕະຈັກກໍສືບຕໍ່ຊຸກຍູ້ໃຫ້ມີມິດຕະພາບຖານອ້າຍນ້ອງໃນຄອບຄົວປະຊາກອນຂອງພຣະອົງ. ມີສາມຂໍ້ສະເໜີແນະນໍາໃນຈໍານວນຂໍ້ສະເໜີທັງຫລາຍ:

- ເພື່ອໃຫ້ສັງຄົມຂອງພວກເຮົາມີມະນຸດສະທໍາຫລາຍຂຶ້ນ, ພວກເຮົາຕ້ອງຮູ້ຈັກຮັບຟັງຊຶ່ງກັນແລະກັນ, ລວມທັງການຮັບຟັງຜູ້ທີ່ບໍ່ເຫັນດ້ວຍກັບພວກເຮົາ ເພື່ອຈະໄດ້ຮຽນຮູ້ແລະກ້າວເດີນໄປພ້ອມກັນບົນເສັ້ນທາງທີ່ແຕກຕ່າງ.ເພາະພຣະກຣິສຕະຈັກຮຽກເອີ້ນພວກເຮົາໃຫ້ມີການສົນທະນາແລະໃຫ້ອອກໄປພົບພໍ້ກັບທຸກຄົນ. ເປັນຕົ້ນຄົນທີ່ບໍ່ຢູ່ໃນກຸ່ມກຣິສຕະຊົນ, ເພາະພວກເຂົາກໍພ້ອມຫລືຍັງທີ່ຈະເຂົ້າມາແລກປ່ຽນສົນທະນາກັບພຣະກຣິສຕະຈັກ?

- ຕໍ່ໜ້າບັນດາຜູ້ອົບພະຍົບແລະຜູ້ລີ້ໄພ, ການທີ່ຈະຮັບຕ້ອນບຸກຄົນໜຶ່ງຫລືຄອບຄົວໜຶ່ງທີ່ອົບພະຍົບກໍອາດເປັນວຽກງານດີສໍາລັບກຸ່ມວັດຫລືສະມາຄົມ. ສ່ວນຫລາຍແມ່ນຄົນທີ່ບໍ່ຮູ້ຈັກສາດສະໜາທີ່ກະທໍາວຽກງານນີ້. ເປັນປະສົບການຊຶ່ງພວກເຮົາໄດ້ກະທໍາຢູ່ Taizé ໃນຫລາຍປີທີ່ຜ່ານມາ, ໃນການຕ້ອນຮັບຜູ້ອົບພະຍົບທີ່ມາຈາກປະເທດອື່ນເຂົ້າມາເຂດບ້ານຂອງພວກເຮົາ.

- ສະຖານທີ່ແຫ່ງການຮັບຕ້ອນກໍແມ່ນສະຖານທີ່ແຫ່ງການຮັບຟັງຜູ້ຄົນທີ່ຢູ່ໃນຄວາມທຸກຍາກ. ມີຫລາຍບ່ອນຊຶ່ງພຣະກຣິສຕະຈັກຈໍາຕ້ອງປົກປ້ອງຄົນທຸກຍາກເຫລົ່ານີ້ທັງຄົບ.

- ບາງຄັ້ງ,ໃນສະຖານທີ່ຕ້ອນຮັບກໍເກີດມີບັນຫາເລື່ອງຄວາມທຸກທໍລະມານຝ່າຍຮ່າງກາຍ, ຝ່າຍແນວຄິດແລະຈິດວິນຍານ.

ຈົ່ງປະໃຫ້ພຣະກຣິສໂຕປ່ຽນແປງວິໄສທັດຂອງພວກເຮົາ: ຜ່ານທາງພຣະອົງ, ພວກເຮົາເຂົ້າໃຈຢ່າງຈະແຈ້ງເຖິງສິດທິຂອງມະນຸດແຕ່ລະຄົນ ແລະຄວາມສວຍງາມຂອງສິ່ງສ້າງ; ຄວາມຫວັງບໍ່ແມ່ນການໄວ້ວາງໃຈແບບເລື່ອນລອຍທີ່ເກີດແລະເກີດອີກເທື່ອໜຶ່ງ. ເພາະຄວາມຫວັງມີຮາກຖານເທິງພຣະກຣິສ; ຄວາມຍິນດີທີ່ແທ້ຈິງຊ່ວຍເຕີມເຕັມໃຫ້ພວກເຮົາ ເພື່ອພວກເຮົາຈະໄດ້ມີຄວາມຫ້າການໃນການປະຕິບັດໜ້າທີ່ຊຶ່ງພຣະເຈົ້າມອບໝາຍໃຫ້ພວກເຮົາບົນແຜ່ນດິນນີ້.

ພ້ອມກັບທຸກຄົນທີ່ປາດຖະໜາຢາກຄິດພິດຈະລະນາຂໍ້ຄວາມທີ່ກ່າວມານີ້, ຂ້າພະເຈົ້າເປັນໜຶ່ງດຽວກັບພວກທ່ານໃນຄຳພາວະນາ.

Br. Alois

ໂອພຣະເຢຊູກຣິສໂຕເຈົ້າ, ພວກຂ້າພະເຈົ້າຂໍສັນລະເສີນພຣະອົງສຳລັບຄວາມດີງາມແລະຄວາມລຽບງ່າຍ. ຜ່ານທາງຄວາມສຸພາບນົບນອບຂອງພຣະອົງ, ແສງສະວ່າງຂອງພຣະເຈົ້າໄດ້ສ່ອງປະກາຍໃນຊີວິດຂອງພຣະອົງ. ວັນນີ້, ແສງສະວ່າງນີ້ກໍໄດ້ສ່ອງສະວ່າງໃນດວງໃຈຂອງພວກຂ້າພະເຈົ້າ. ແສງສະວ່າງນີ້ສາມາດປິ່ນປົວບາດແຜຂອງພວກຂ້າພະເຈົ້າແລະກໍໄດ້ຜັນປ່ຽນຄວາມອ່ອນແອແລະຄວາມບໍ່ແນ່ນອນຂອງພວກຂ້າພະເຈົ້າໃຫ້ເປັນບໍ່ເກີດແຫ່ງພະລັງສ້າງສັນ ແລະເປັນພຣະຄຸນແຫ່ງການໄວ້ວາງໃຈ. ດ້ວຍຄວາມສະວ່າງຂອງພຣະເຈົ້ານີ້, ພຣະອົງໄດ້ໃຫ້ພວກຂ້າພະເຈົ້າມີຄວາມຫວັງໃນປັດຈຸບັນແລະໃນອະນາຄົດດ້ວຍ.

---

ຢູ່ Taizé, ພວກເຮົາກໍສືບຕໍ່ວຽກງານການຕ້ອນຮັບນີ້ໃນແສງສະວ່າງຂອງຄວາມຈິງ(www.taize.fr/protection).

**ຂໍ້ຄວາມບາງຕອນຂອງພຣະຄໍາພີເພື່ອລົງເລິກໃນການລໍາເພີງ**

**ພຣະນາງມາຣີອາຮ້ອງສັນລະເສີນພຣະເຈົ້າດ້ວຍຄໍາເຫລົ່ານີ້: "ພຣະເຈົ້າໄດ້ຊົງປົດຜູ້ມີອໍານາດລົງຈາກບັນລັງແລະຍົກຍໍຜູ້ຕໍ່າຕ້ອຍຂຶ້ນບ່ອນສູງ. (...) ຜູ້ເສດຖີພຣະອົງໄລ່ໜີໄປມືເປົ່າ" (ອ່ານ: ລູກາ 1, 46-56).**

ພຣະນາງມາຣີອາມານດາຂອງພຣະເຢຊູເຈົ້າຮູ້ຈັກຮວບຮວມຄວາມຮັກ, ຄວາມອ່ອນຫວານກັບຄວາມຫວັງທີ່ຮ້ອນຮົນ ເພື່ອຜັນປ່ຽນຊີວິດຢ່າງແທ້ຈິງ.

**ພຣະເຢຊູເຈົ້າກ່າວວ່າ: "ຜູ້ຊຶ່ງຈະມາເພື່ອຊ່ວຍເຫລືອພວກເຈົ້າ, ພຣະຈິດເຈົ້າຊຶ່ງພຣະບິດາຈະສົ່ງມາໃນນາມຂອງເຮົາ, ພຣະອົງຈະສັ່ງສອນພວກເຈົ້າທຸກຢ່າງທີ່ເຮົາເອງໄດ້ບອກພວກເຈົ້າແລ້ວ". (ອ່ານ: ຢວງ 14, 15-31).**

ພຣະເຢຊູເຈົ້າບໍ່ໄດ້ປະໃຫ້ພວກເຮົາຕ້ອງເປັນກໍາພ້າ. ກ່ອນທີ່ພຣະອົງຈະສິ້ນພຣະຊົນ, ພຣະອົງໄດ້ບອກໃຫ້ພວກລູກສິດເຖິງການປະຈັກຢູ່ຂອງພຣະອົງກັບພວກເຂົາຈົນເຖິງວັນສິ້ນໂລກ ຜ່ານທາງພຣະຈິດເຈົ້າ. ພຣະຈິດເຈົ້າຈະຢູ່ໃນພວກເຮົາ, ພຣະອົງຈະບັນເທົາໃຈພວກເຮົາ, ພຣະອົງຈະຊ່ວຍພວກເຮົາແລະດົນໃຈພວກເຮົາໃຫ້ດໍາລົງຊີວິດໃນການຕິດຕາມພຣະເຢຊູເຈົ້າແຕ່ລະມື້ແຕ່ລະວັນ.

**"ຟ້າສະຫວັນຈົ່ງຊື່ນຊົມຍິນດີ, ແຜ່ນດິນຈົ່ງໂຮຮ້ອງຍິນດີ, ໃຫ້ທະເລຈົ່ງໂດດເຕັ້ນຍິນດີແລະທຸກສິ່ງທີ່ຢູ່ໃນນັ້ນ! ໃຫ້ໝູ່ບ້ານທັງຫລາຍຈົ່ງສັນລະເສີນແລະທຸກສິ່ງທີ່ຢູ່ໃນນັ້ນ! ໃຫ້ຕົ້ນໄມ້ໃບຫຍ້າໃນປ່າຈົ່ງໂຮຮ້ອງຍິນດີຕໍ່ໜ້າພຣະພັກພຣະເຈົ້າ, ເພາະພຣະອົງໄດ້ສະເດັດມາ, ພຣະອົງມາເພື່ອນໍາຄວາມຍຸດຕິທໍາມາໃຫ້ແຜ່ນດິນໂລກ". (ອ່ານ: ເພງສັກສິດ 96).**

ຍັງມີບົດເພງສັກສິດອີກຫລາຍບົດທີ່ເຊື້ອເຊີນພວກເຮົາໃຫ້ສັນລະເສີນພຣະເຈົ້າ. ບໍ່ພຽງແຕ່ມະນຸດເທົ່ານັ້ນທີ່ສັນລະເສີນພຣະເຈົ້າ, ແຕ່ແມ່ນສິ່ງສ້າງທັງມວນອີກດ້ວຍ. ພວກເຮົາບໍ່ໄດ້ປົກປັກຮັກສາສິ່ງແວດລ້ອມເພາະພວກເຮົາຢາກໃຫ້ມັນມີຢູ່ໃນແຜ່ນດິນນີ້, ແຕ່ຍ້ອນພວກມັນກໍແມ່ນພາກສ່ວນໜຶ່ງໃນແຜນການຂອງພຣະເຈົ້າເຊັ່ນດຽວກັນ.

## ການສະແຫວງບຸນໃນຄວາມໄວ້ວາງໃຈສຳລັບປີ 2021

ການສະແຫວງບຸນໃນຄວາມໄວ້ວາງໃຈບົນແຜ່ນດິນຍັງສືບຕໍ່. ສະພາບການສັງຄົມໃນປັດຈຸບັນນີ້ແມ່ນບໍ່ແນ່ນອນ. ດັ່ງນັ້ນ, ພວກເຮົາຈຶ່ງຊອກຫາຮູບແບບໃໝ່ເຊັ່ນ: ຄວາມຄິດລິເລີ່ມບົນອິນເຕີເນັດ: ໃນຊ່ວງເວລາຂອງການກັກຕົວທຳໃຫ້ພວກເຮົາເຂົ້າໃຈດີຂຶ້ນວ່າ ການສື່ສານພົວພັນເປັນສິ່ງສຳຄັນ. ແລະພວກເຮົາສາມາດສື່ສານພົວພັນກັນໄດ້ດ້ວຍອາໄສເຄື່ອງມືສື່ສານທາງອິນເຕີເນັດ.

ໃນບໍລິບົດຂອງໂລກລະບາດໂກວິດ, ການຊຸມນຸມອາດຈະບໍ່ໄດ້ເກີດຂຶ້ນດັ່ງທີ່ໄດ້ຄາດໝາຍໄວ້. ແຕ່ພວກເຮົາຫວັງວ່າຈະມີການຈັດຕັ້ງໃນປີ 2021 ການສະແຫວງບຸນໃນຄວາມຫວັງດັ່ງຕໍ່ໄປນີ້:

- ການຊຸມນຸມແຕ່ລະອາທິດຢູ່ Taizé, ຕະຫລອດປີນີ້ຖ້າສະພາບການເອື້ອອຳນວຍ.
- ການຊຸມນຸມລະຫວ່າງປະເທດບົນອິນເຕີເນັດຈາກ Taizé ແລະຈາກປະເທດອື່ນໃນໂລກຊຶ່ງມີ brother ອາໄສຢູ່.
- ສັບປະດາມິດຕະພາບລະຫວ່າງໜຸ່ມເຍົາວະຊົນມຸດສະລິມແລະກຣິສຕຽນ. ແຕ່ວັນທີ 14 ຫາ 18 ກໍລະກົດ 2021.
- ສັບປະດາແຫ່ງການແລກປ່ຽນຄວາມຄິດເຫັນສຳລັບໜຸ່ມເຍົາວະຊົນທີ່ມີອາຍຸ 18 ຫາ 35 ປີ. ແຕ່ວັນທີ 22 ຫາ 29 ສິງຫາ 2021.
- ການຊຸມນຸມຂອງທະວີບຢູໂຣບຢູ່ Turin. ແຕ່ວັນທີ 28 ທັນວາ 2021 ຫາ ວັນທີ 1 ມັງກອນ 2022.

ທ້າຍສຸດ, ພວກເຮົາຫວັງວ່າຈະສາມາດຈັດຕັ້ງໃນປີ 2022 ຂັ້ນຕອນການສະແຫວງບຸນໃນຄວາມຫວັງທີ່ແຜ່ນດິນສັກສິດຊຶ່ງພວກເຮົາໄດ້ປະກາດສຳລັບປີ 2021.

ສຳລັບວັນທີ່ນັ້ນຈະປະກາດໃຫ້ຮູ້ຈັກພາຍຫລັງ.